# Agriculture Economics
## Week 8- Midterm Exam Answer Sheet

## ຂະໜານຕອບບົດສອບເສັງກາງພາກ
## Midterm Exam

**1. ຈົ່ງຍົກໃຫ້ເຫັນບົດບາດທີ່ພົ້ນເດັ່ນຂອງຂະແໜງການກະສິກຳຕໍ່ກັບການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວ?**

**<u>ຕອບ:</u>** ຂະແໜງການກະສິກຳມີບົດບາດສຳຄັນຫຼາຍຕໍ່ການພັດທະນາເສດຖະກິດຂອງ ສປປ ລາວ ເຊິ່ງສາມາດສັງລວມໄດ້ ດັ່ງນີ້: ການສ້າງວຽກເຮັດງານທຳ:ກະສິກຳເປັນແຫຼ່ງວຽກເຮັດງານທຳທີ່ສຳຄັນທີ່ສຸດ, ກວມເອົາປະມານ 60% ຂອງແຮງງານທັງໝົດ, ສ້າງລາຍຮັບໃຫ້ປະຊາຊົນໃນເຂດຊົນນະບົດ, ການປະກອບສ່ວນເຂົ້າໃນ GDP: ກວມເອົາປະມານ 15-20% ຂອງ GDP, ສ້າງມູນຄ່າເພີ່ມໃຫ້ເສດຖະກິດແຫ່ງຊາດ, ຄວາມໝັ້ນຄົງດ້ານສະບຽງອາຫານ: ຮັບປະກັນການສະໜອງອາຫານພາຍໃນປະເທດ, ຫຼຸດຜ່ອນການເພິ່ງພາການນຳເຂົ້າ, ການສົ່ງອອກ: ສິນຄ້າກະສິກຳເປັນສິນຄ້າສົ່ງອອກທີ່ສຳຄັນ ເປັນຕົ້ນແມ່ນມັນຕົ້ນ, ໝາກກ້ວຍ, ຢາງພາລາ ແລະ ອື່ນໆ.... ເຊິ່ງສາມາດສ້າງລາຍຮັບເປັນເງິນຕາຕ່າງປະເທດໄດ້, ການພັດທະນາຊົນນະບົດ: ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊົນນະບົດ, ຫຼຸດຜ່ອນຄວາມທຸກຍາກ, ການເຊື່ອມໂຍງກັບຂະແໜງການອື່ນ: ສະໜອງວັດຖຸດິບໃຫ້ອຸດສາຫະກຳປຸງແຕ່ງ, ກະຕຸ້ນການພັດທະນາພື້ນຖານໂຄງລ່າງ

**2. ສິ່ງທ້າທາຍໃນການພັດທະນາກະສິກຳ?**

**<u>ຕອບ:</u>** ສິ່ງທ້າຍທາຍໃນການພັດທະນາກະສິກຳ ໂດຍສະເພາະປະເທດທີ່ກຳລັງພັດທະນາເຊິ່ງສາມາດສະຫຼຸບໄດ້ດັ່ງນີ້:

- ຂໍ້ຈຳກັດດ້ານຊັບພະຍາກອນ: ການເຂົ້າເຖິງທີ່ດິນນໍ້າ, ທຶນ. ພື້ນຖານໂຄງລ່າງທີ່ທຸກຍາກເຊັ່ນຖະໜົນຫົນທາງ ແລະ ລະບົບຊົນລະປະທານ, ຍັງຂັດຂວາງການຂະຫຍາຍຕົວ
- ຄວາມຍືນຍົງຂອງສິ່ງແວດລ້ອມ: ການນຳໃສ່ເຄມີຫຼາຍເກີນໄປ, ການຕັດໄມ້ທຳລາຍປ່າ ສາມາດເຮັດໃຫ້ດິນຊຸດໂຊມ, ຂາດນໍ້າ ແລະ ບັນຫາອື່ນໆ
- ການເຂົ້າເຖິງຕະຫຼາດ: ໃນປະເທກຳລັງພັດທະນາມັກຈະປະສົບກັບຄວາມຫຍຸ້ງຍາກໃນການເຂົ້າເຖິງຕະຫຼາດ ເຮັດໃຫ້ລະບົບຕ່ອງໂສ້ການສະໜອງຂາດປະສິດທິພາບ ແລະ ຜົນການໄລຕ່ຳ
- ການປ່ຽນແປງຂອງດິນຟ້າອາກາດ: ກະສິກຳມີຄວາມອ່ອນໄຫວສູງຕໍ່ສະພາບດິນຟ້າອາກາດສ້າງຄວາມສ່ຽງຕໍ່ການຜະລິດຕະພັນກະສິກຳ

**3. ສົມມຸດໃຫ້ປັດໄຈອື່ນທີ່ໃຊ້ເຂົ້າໃນການຜະລິດນຳໃຊ້ຄົງທີ່ມີພຽງແຕ່ປັດໄຈ $X_1$ ທີ່ປ່ຽນແປງ ໂດຍສະແດງໃນຕາຕະລາງລຸ່ມນີ້:**

| $X_1$ | TP | MP | AP |
|---|---|---|---|
| 2 | 10 | | 5 |
| 4 | 16 | 3 | 4 |
| 5 | 17 | 1 | 3.4 |
| 8 | 17 | 0 | 2.12 |
| 10 | 12 | -2.5 | 1.2 |

**ຕອບ:** ການນຳໃຊ້ປັດໄຈ $X_1$ ຈຳນວນ 8 ໜ່ວຍຈຶ່ງເຮັດໃຫ້ຜູ້ຜະລິດໄດ້ຮັບກຳໄລສູງສຸດ ເນື່ອງຈາກ MP =0 ຖ້າຫາກເພີ່ມການຜະລິດອີກຈະເຮັດໃຫ້ຜົນຜະລິດສ່ວນເພີ່ມຫຼຸດລົງ ແລະ ຕິດຄ່າລົບ

**4. ຊາວກະສິກອນມີຮູບແບບການຕັດສິນໃຈ ແນວໃດໃນການຜະລິດສິນຄ້າໂດຍມີຈັກຮູບແບບຄືຮູບແບບໃດແດ່? ອະທິບາຍເຄື່ອງມືທີ່ໃຊ້ວິເຄາະຫາຈຸດທີ່ເໝາະສົມໃນການຜະລິດເພື່ອຊ່ວຍໃນການຕັດສິນໃຈຂອງຊາວກະສິກອນ?**

ຕອບ: ຊາວກະສິກອນໃນຖານະຂອງຜູ້ຜະລິດຈະຕັດສິນໃຈທຳການຜະລິດສິນຄ້າ ເພື່ອຕ້ອງການໄດ້ຮັບກຳໄລ ຫຼື ລາຍໄດ້ສູງສຸດ ຊາວກະສິກອນຈະຕ້ອງມີການຕັດສິນໃຈໃນຫຼາຍຮູບແບບດ້ວຍກັນ ຄື:

- ການຕັດສິນໃຈເລືອກໃຊ້ປັດໄຈການຜະລິດໜຶ່ງຢ່າງ ເພື່ອຜົນຜະລິດ ຫຼື ສິນຄ້າໃຫ້ໄດ້ຈຳນວນໜຶ່ງ ໂດຍໃຫ້ໄດ້ລາຍໄດ້ສູງສຸດໃນທາງເສດຖະສາດເປັນການຕັດສິນໃຈທີ່ເອີ້ນວ່າ Input-Output Decision ໂດຍການສຶກສາເລື່ອງທິດສະດີການຜະລິດ ຄື ການສຶກສາທີ່ອະທິບາຍຄວາມສຳພັນລະຫວ່າງປັດໄຈການຜະລິດທີ່ໃຊ້ໃນຂະບວນການຜະລິດກັບຈຳນວນຜົນຜະລິດທີ່ໄດ້ຮັບ ຄວາມສຳພັນລະຫວ່າງປັດໄຈການຜະລິດ ແລະ ຜົນຜະລິດໃນຂະບວນການຜະລິດຢ່າງໃດຢ່າງໜຶ່ງ ເອີ້ນວ່າ ຟັງຊັນການຜະລິດ (Production function) ຄວາມສຳພັນດັ່ງກ່າວຈະເປັນໄປຕາມກົດຜົນຕອບແທນຫຼຸດນ້ອຍຖອຍລົງເພື່ອເປັນເຄື່ອງມືທີ່ນຳໃຊ້ໃນການວິເຄາະຫາຈຸດທີ່ເໝາະສົມທີ່ສຸດໃນການຜະລິດ.
- ການຕັດສິນໃຈເລືອກໃຊ້ປັດໄຈການຜະລິດຫຼາຍຢ່າງ ເພື່ອຜະລິດຜົນ ຫຼື ສິນຄ້າໃຫ້ໄດ້ຈຳນວນໜຶ່ງໂດຍໃຫ້ເສຍຕົ້ນທຶນຕ່ຳສຸດ ໃນທາງເສດຖະສາດເປັນການຕັດສິນໃຈທີ່ເອີ້ນວ່າInput-Input Decision ເຊິ່ງເຄື່ອງມືທີ່ນຳໃຊ້ໃນການວິເຄາະຫາຈຸດທີ່ເໝາະສົມທີ່ສຸດໃນການຜະລິດຄື ເສັ້ນຜົນຜະລິດເທົ່າກັນ ແລະ ເສັ້ນຕົ້ນທຶນເທົ່າກັນ.
- ການຕັດສິນໃຈເລືອກການຜະລິດ ຜົນຜະລິດຕ່າງໆ ຈາກປັດໄຈການຜະລິດທີ່ຜູ້ຜະລິດມີຢູ່ຈຳນວນໜຶ່ງ ເພື່ອໃຫ້ໄດ້ຜົນຕອບແທນສູງສຸດໃນທາງເສດຖະສາດເປັນການຕັດສິນໃຈທີ່ເອີ້ນວ່າ Output-Output Decision ເຊິ່ງເຄື່ອງມືທີ່ນຳໃຊ້ໃນການວິເຄາະຫາຈຸດທີ່ເໝາະສົມທີ່ສຸດໃນການຜະລິດຄື ເສັ້ນເປັນໄປໄດ້ໃນການຜະລິດ ແລະ ເສັ້ນລາຍຮັບເທົ່າກັນ.

**5. ຄວາມສ່ຽງ (Risk) ໝາຍເຖິງຫຍັງ? ໃນການຜະລິດສິນຄ້າກະເສດ ສາມາດແບ່ງອອກເປັນຈັກປະເພດຄືປະເພດໃດແດ່? ໃຫ້ພວກນ້ອງຈະມີວິທີການໃດແດ່ກ່ຽວກັບການຈັດການຄວາມສ່ຽງເພື່ອການພັດທະນາສິນຄ້າກະເສດແບບຍືນຍົງ?**

<u>**ຕອບ:**</u> ຄວາມສ່ຽງ (Risk) ໝາຍເຖິງ ຄືການວັດຄວາມສາມາດທີ່ຈະດໍາເນີນການຕາມວັດຖຸປະສົງຂອງການຜະລິດສິນຄ້າໃຫ້ສໍາເລັດພາຍໃຕ້ການຕັດສິນໃຈ ງົບປະມານ ກໍານົດເວລາ ແລະ ຂໍ້ຈໍາກັດເທັກນິກທີ່ພົບຢູ່. ໃນການຜະລິດສິນຄ້າກະເສດ ສາມາດແບ່ງອອກເປັນ 2 ປະເພດຄືປະເພດຄວາມສ່ຽງດ້ານຜົນຜະລິດເປັນຄວາມສ່ຽງທີ່ເກີດຈາກປັດໄຈພາຍນອກເໜືອການຄວບຄຸມຂອງຊາວກະສິກອນ, ຄວາມສ່ຽງດ້ານລາຄາເປັນຄວາມສ່ຽງທີ່ເກີດຈາກສະພາບການປ່ຽນແປງຂອງອຸປະສົງ ແລະ ອຸປະທານ, ວິທີການ ກ່ຽວກັບການຈັດການ ຫຼື ຫຼຸດຜ່ອນຄວາມສ່ຽງເພື່ອການພັດທະນາສິນຄ້າກະເສດແບບຍືນຍົງປະກອບມີການປູກພືດຫຼາຍຊະນິດ ຫຼື ຂາຍຜົນຜະລິດຫຼາຍຊ່ວງເວລາ, ການປະກັນໄພພືດ, ການເຮັດສັນຍາຊື້ຂາຍລ່ວງໜ້າ, ການຂາຍເໜົາ, ມີຄວາມຄ່ອງຕົວໃນການປ່ຽນແປງການຜະລິດ, ຖືເງິນສົດ ຫຼື ຊັບສິນທີ່ສາມາດປ່ຽນເປັນເງິນສົດໄດ້ງ່າຍ.